ASEAN
LAO PDR 2024
ASEAN : Enhancing Connectivity and Resilience

# ບົດຖະແຫລງຂ່າວ

# ຜົນຂອງກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງ

**ໂດຍ ພະນະທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ວັນທີ 11 ຕຸລາ 2024 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫລວງວຽງຈັນ

- **ສະບາຍດີ ບັນດາທ່ານ ຜູ້ຕາງໜ້າສື່ມວນຊົນ,**
- **ທ່ານ ຍິງ ແລະ ທ່ານ ຊາຍ,**

• ຂ້າພະເຈົ້າ ມີຄວາມປິຕິຍິນດີຕ້ອນຮັບບັນດາທ່ານຜູ້ຕາງໜ້າ ສື່ມວນຊົນທັງພາຍໃນ ແລະ ຕ່າງປະເທດ ເຂົ້າສູ່ກອງປະຊຸມຖະແຫລງຂ່າວ ຜົນຂອງກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງ ພາຍໃຕ້ຄຳຂວັນ **ເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງອາຊຽນ** ທີ່ໄດ້ຈັດຂຶ້ນໃນວັນທີ 9-11 ຕຸລາ 2024.

• ຂ້າພະເຈົ້າ ຂໍແຈ້ງໃຫ້ບັນດາທ່ານຮັບຊາບໂດຍລວມ ຜົນຂອງບັນດາກອງປະຊຸມສຸດຍອດໃນໄລຍະ 3 ວັນຜ່ານມາ ດັ່ງນີ້:

• ພວກເຮົາໄດ້ຈັດບັນດາກອງປະຊຸມສຸດຍອດທັງຫມົດມີ 16 ກອງປະຊຸມສຸດຍອດ ຄື:

  - **ພາຍໃນອາຊຽນ,** ພວກເຮົາ ໄດ້ຈັດ 2 ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ແບບຕິດຕໍ່ກັນ. ໃນໂອກາດນີ້, ບັນດາຜູ້ນຳອາຊຽນ ກໍໄດ້ພົບປະກັບ ບັນດາຜູ້ຕາງຫນ້າຈາກສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ, ຊາວຫນຸ່ມອາຊຽນ ແລະ ສະພາທີ່ປຶກສາທຸລະກິດອາຊຽນ. ນອກຈາກນີ້, ໃນໄລຍະກ່ອນກອງປະຊຸມສຸດຍອດອາຊຽນຄັ້ງທີ 44 ແລະ 45 ແລະ ກອງປະຊຸມສຸດຍອດທີ່ກ່ຽວຂ້ອງ ກໍໄດ້ມີກອງປະຊຸມສຸດຍອດພາກທຸລະກິດ ແລະ ການລົງທຶນ (ABIS) ແລະ ກິດຈະກຳປິ່ນອ້ອມອື່ນໆ.
  - **ສຳລັບອາຊຽນກັບພາຍນອກ,** ບັນດາຜູ້ນຳອາຊຽນ ໄດ້ມີ 10 ກອງປະຊຸມສຸດຍອດ ກັບ ບັນດາຜູ້ນຳຂອງຄູ່ເຈລະຈາ ພາຍໃຕ້ຂອບການຮ່ວມມື ອາຊຽນ ບວກ ຫນຶ່ງ, ອາຊຽນ ບວກ ສາມ ແລະ ກອງປະຊຸມສຸດຍອດອາຊີຕາເວັນອອກ.
  - ພ້ອມກັນນີ້ ກໍມີກອງປະຊຸມຜູ້ນຳປະຊາຄົມອາຊີ ເພື່ອຫຼຸດຜ່ອນອາຍພິດໃຫ້ເຫຼືອສູນ ຄັ້ງທີ 2 ແລະ ການພົບປະສອງຝ່າຍ ຢ່າງຫລວງຫລາຍ.

- ໃນທຸກໆກອງປະຊຸມ, ພວກເຮົາ ໄດ້ມີການປຶກສາຫາລືກັນຢ່າງກວ້າງຂວາງ, ກົງໄປກົງມາ, ສ້າງສັນ ແລະ ມີຫມາກຜົນ.

- **ໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45**, ພວກເຮົາ ໄດ້ປຶກສາຫາລືຫົວຂໍ້ຕ່າງໆດັ່ງນີ້:
  - ພວກເຮົາ ໄດ້ທົບທວນຄືນການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ 2025, ການສ້າງວິໄສທັດປະຊາຄົມອາຊຽນ 2045 ແລະ ການຮັດແໜ້ນການຮ່ວມມືກັບພາຍນອກ.
  - ບັນດາຜູ້ນຳອາຊຽນ ມີຄວາມຍິນດີຕໍ່ຄວາມຄືບຫນ້າຂອງການຈັດຕັ້ງປະຕິບັດ 9 ຂົງເຂດບູລິມະສິດຂອງການເປັນປະທານອາຊຽນ ຂອງ ສປປ ລາວ ໃນປີ 2024 ທີ່ສຸມໃສ່ການເພີ່ມທະວີການເຊື່ອມໂຍງ-ເຊື່ອມຈອດ ໃນຂົງເຂດເສດຖະກິດ, ສ້າງອະນາຄົດແບບທົ່ວເຖິງ ແລະ ຍືນຍົງ, ການຫັນປ່ຽນສູ່ຍຸກດີຈີຕອນ; ການສ້າງແຜນຍຸດທະສາດເພື່ອຈັດຕັ້ງປະຕິບັດ ວິໄສທັດປະຊາຄົມອາຊຽນ 2045 ກໍຄື ແຜນຍຸດທະສາດ 3 ເສົາຄໍ້າ: ການເມືອງ-ຄວາມໝັ້ນຄົງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຍຸດທະສາດວ່າດ້ວຍການເຊື່ອມຈອດ, ການຮັດແໜ້ນຄວາມເປັນແກນກາງຂອງອາຊຽນ, ສົ່ງເສີມການຮ່ວມມືດ້ານສິ່ງແວດລ້ອມ, ການສົ່ງເສີມດ້ານວັດທະນະທຳ ແລະ ສິລະປະ, ສົ່ງເສີມບົດບາດແມ່ຍິງ ແລະ ເດັກ, ແລະ ການສົ່ງເສີມຄວາມເຂັ້ມແຂງດ້ານສາທາລະນະສຸກ.
  - ພວກເຮົາ ເຫັນດີ ເລັ່ງດຳເນີນການປະເມີນຜົນການຈັດຕັ້ງປະຕິບັດ ແຜນແມ່ບົດເສົາຄໍ້າປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ, ເສົາຄໍ້າເສດຖະກິດ ແລະ ເສົາຄໍ້າວັດທະນະທຳ-ສັງຄົມ ກໍຄືການເຊື່ອມຈອດ ແລະ ເຊື່ອມໂຍງອາຊຽນ ເພື່ອຖອດຖອນບົດຮຽນ ແລະ ນຳໃຊ້ເປັນພື້ນຖານໃຫ້ແກ່ການສ້າງບັນດາແຜນຍຸດທະສາດຂອງອາຊຽນ ເພື່ອຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ 2045, ຊຶ່ງຈະຮັບຮອງເອົາໃນປີ 2025 ແນໃສ່ສ້າງປະຊາຄົມອາຊຽນທີ່ເຂັ້ມແຂງ, ມີນະວັດຕະກຳ, ຄ່ອງແຄ້ວ ແລະ ມີປະຊາຊົນເປັນແກນກາງ.
  - ພວກເຮົາ ມີຄວາມຍິນດີ ຕໍ່ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານສຳລັບການເປັນສະມາຊິກສົມບູນອາຊຽນ ຂອງ ຕີມໍແລັດສະເຕ.
  - ພວກເຮົາ ໄດ້ຢໍ້າຄືນຄວາມສຳຄັນ ໃນການສືບຕໍ່ຮັດແຫນ້ນການພົວພັນກັບພາຍນອກ ກໍຄື ເສີມຂະຫຍາຍຄວາມເປັນເອກະພາບ ແລະ ຄວາມເປັນແກນກາງຂອງອາຊຽນໃນໂຄງສ້າງພາກພື້ນທີ່ພວມພັນແປ ໂດຍຜ່ານບັນດາກົນໄກທີ່ອາຊຽນເປັນຜູ້ນຳພາ. ພວກເຮົາ ຍິນດີຕໍ່ການສະໜັບສະໜູນຂອງຄູ່ຮ່ວມພາຍນອກໃນການສ້າງຄວາມເຂັ້ມແຂງຂອງປະຊາຄົມອາຊຽນ ກໍຄືບູລິມະສິດສຳລັບປະທານອາຊຽນ ຂອງ ສປປ ລາວ.
  - ພວກເຮົາໄດ້ທົບທວນຄືນການຈັດຕັ້ງປະຕິບັດ 5 ຂໍ້ຕົກລົງຂອງຜູ້ນຳອາຊຽນ ກ່ຽວກັບມຽນມາ, ແລະ ເຫັນດີໃຫ້ສືບຕໍ່ຍຶດໝັ້ນ ໃນຄວາມໝາຍໝັ້ນຂອງອາຊຽນ ເພື່ອຊ່ວຍເຫຼືອມຽນມາ ຊອກວິທີການແກ້ໄຂດ້ານການເມືອງ ໂດຍສັນຕິວິທີ, ຍືນຍົງ, ມຽນມາ-ເປັນເຈົ້າການ ແລະ ມຽນມາ-ເປັນຜູ້ນຳພາ ໂດຍຜ່ານການຈັດຕັ້ງປະຕິບັດ 5 ຂໍ້ຕົກລົງຂອງຜູ້ນຳອາຊຽນ.

- **ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ໄດ້ຮັບຮອງ ແລະ ຮັບຊາບ ເອກະສານຈຳນວນ 56 ສະບັບ, ຊຶ່ງເອກະສານສຳຄັນມີດັ່ງນີ້:**
    - ຖະແຫລງການຜູ້ນຳອາຊຽນ ວ່າດ້ວຍ ການສ້າງແຜນຍຸດທະສາດ ເພື່ອຈັດຕັ້ງປະຕິບັດ ວິໄສທັດປະຊາຄົມອາຊຽນ 2045.
    - ຖະແຫຼງການຜູ້ນຳອາຊຽນ ວ່າດ້ວຍ ແນວຄວາມຄິດອາຊຽນ ກ່ຽວກັບ ອິນໂດ-ປາຊີຟິກ ໃນໂຄງສ້າງພາກພື້ນທີ່ມີອາຊຽນເປັນໃຈກາງ ແລະ ມີຄວາມກຽມພ້ອມສຳລັບອະນາຄົດ.
    - ຖະແຫຼງການຜູ້ນຳອາຊຽນ ວ່າດ້ວຍການເພີ່ມທະວີການເຊື່ອມຈອດຕ່ອງໂສ້ການສະໜອງ,
    - ຖະແຫຼງການຜູ້ນຳອາຊຽນວ່າດ້ວຍການສົ່ງເສີມກະສິກຳແບບຍືນຍົງ,
    - ຖະແຫຼງການຜູ້ນຳອາຊຽນວ່າດ້ວຍການຮັດແໜ້ນຄວາມປອດໄພ ແລະ ຄວາມໝັ້ນຄົງດ້ານຊີວະພາບໃນພາກພື້ນ,
    - ຖະແຫຼງການວຽງຈັນວ່າດ້ວຍການສົ່ງເສີມຜະລິດຕະພັນວັດທະນະທຳ ຂະໜາດນ້ອຍ ແລະ ຂະໜາດກາງ ຄຽງຄູ່ກັບການເຕີບໂຕສີຂຽວ ແລະ ການພັດທະນາແບບຍືນຍົງ.
    - ເອກະສານການທົບທວນ ແລະ ຄຳຕົກລົງຂອງຜູ້ນຳອາຊຽນ ກ່ຽວກັບການຈັດຕັ້ງປະຕິບັດ 5 ຂໍ້ຕົກລົງຂອງຜູ້ນຳປີ 2024 ເພື່ອສືບຕໍ່ເປັນເອກະສານອ້າງອີງສຳຄັນສຳລັບການແກ້ໄຂບັນຫາພາຍໃນຂອງມຽນມາໃນຕໍ່ໜ້າ.

**ບັນດາສື່ມວນຊົນ ທີ່ຮັກແພງ,**

- **ສໍາລັບກອງປະຊຸມສຸດຍອດອາຊຽນກັບພາຍນອກ,** ບັນດາຜູ້ນຳອາຊຽນໄດ້ມີກອງປະຊຸມສຸດຍອດກັບແຕ່ລະຄູ່ເຈລະຈາ ແລະ ຄູ່ຮ່ວມມື ເຊັ່ນ: ສປ ຈີນ, ສ. ເກົາຫລີ, ຍີ່ປຸ່ນ, ອິນເດຍ, ອົດສະຕຣາລີ, ສະຫະລັດອາເມລິກາ, ການາດາ ແລະ ອົງການ ສະຫະປະຊາຊາດ (ສປຊ), ຊຶ່ງຜູ້ນໍາອາຊຽນ ແລະ ຄູ່ເຈລະຈາ ໄດ້ທົບທວນຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ຕ່າງກໍເຫັນດີສືບຕໍ່ຮັດແໜ້ນການຮ່ວມມືໃນທຸກຂົງເຂດໃຫ້ມີປະສິດທິພາບ ແລະ ປະສິດທິຜົນກວ່າເກົ່າ ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ. ພ້ອມນີ້, ກໍໄດ້ມີກອງປະຊຸມສຸດຍອດອາຊຽນບວກສາມ ແລະ ກອງປະຊຸມສຸດຍອດອາຊີຕາເວັນອອກ. ເນື້ອໃນສຳຄັນສຳລັບກອງປະຊຸມສຸດຍອດອາຊຽນ ກັບພາຍນອກ ມີດັ່ງນີ້:
    - **ກອງປະຊຸມສຸດຍອດອາຊຽນ-ຈີນ ຄັ້ງທີ 27:** ຜູ້ນໍາອາຊຽນ-ຈີນ ໄດ້ປະກາດການສຳເລັດການເຈລະຈາເພື່ອຍົກລະດັບສັນຍາເຂດການຄ້າເສລີອາຊຽນ-ຈີນ 3.0 ທີ່ເປັນເອກະສານພື້ນຖານທີ່ສຳຄັນໃນການສົ່ງເສີມ ແລະ ເພີ່ມທະວີການຮ່ວມມືດ້ານເສດຖະກິດອາຊຽນ-ຈີນ ແລະ ໄດ້ຮັບຮອງເອົາ 5 ເອກະສານຜົນກອງປະຊຸມ ຄື: 1). ຖະແຫຼງການຮ່ວມອາຊຽນ-ຈີນ ວ່າດ້ວຍ ການຕ້ານການສໍ້ໂກງດ້ານເຄືອຂ່າຍໂທລະຄົມ ແລະ ການພະນັນອອນລາຍ; 2). ຖະແຫຼງການຮ່ວມອາຊຽນ-ຈີນ ວ່າດ້ວຍ ການຮັດແໜ້ນການຮ່ວມມືດ້ານໄປມາຫາສູ່ລະຫວ່າງປະຊາຊົນກັບປະຊາຊົນ; 3). ຖະແຫຼງການຮ່ວມ

ອາຊຽນ-ຈີນ ວ່າດ້ວຍ ການສົ່ງເສີມການພັດທະນາກະສິກຳທັນສະໄໝ; 4). ຖະແຫຼງການຮ່ວມອາຊຽນ-ຈີນ ວ່າດ້ວຍ ການຮ່ວມມືເພື່ອອຳນວຍຄວາມສະດວກ ໃນການສ້າງລະບົບນິເວດດິຈິຕອນ ທີ່ກວມລວມ ແລະ ຍືນຍົງ; ແລະ 5). ຖະແຫຼງການຮ່ວມ ວ່າດ້ວຍ ການສະຫຼຸບເນື້ອໃນສຳຄັນຂອງການເຈລະຈາ ຍົກລະດັບສັນຍາການຄ້າເສລີ ອາຊຽນ-ຈີນ ສະບັບທີ 3.0.

- **ກອງປະຊຸມສຸດຍອດອາຊຽນ-ສ.ເກົາຫລີ ຄັ້ງທີ 25:** ພວກເຮົາໄດ້ຮ່ວມກັນສະເຫຼີມສະຫຼອງຄົບຮອບ 35 ປີ ການພົວພັນຮ່ວມມືອາຊຽນ-ສ. ເກົາຫລີ ແລະ ໄດ້ຍົກລະດັບການພົວພັນອາຊຽນ-ສ. ເກົາຫລີ ຂຶ້ນເປັນຄູ່ຮ່ວມຍຸດທະສາດຮອບດ້ານ ໂດຍການຮັບຮອງເອົາຖະແຫຼງການຮ່ວມ ຂອງຜູ້ນຳອາຊຽນ-ສ. ເກົາຫຼີ ວ່າດ້ວຍການສ້າງຕັ້ງການເປັນຄູ່ຮ່ວມຍຸດທະສາດຮອບດ້ານອາຊຽນ-ສ.ເກົາຫຼີ.
- **ກອງປະຊຸມສຸດຍອດອາຊຽນ-ຍີ່ປຸ່ນ ຄັ້ງທີ 27:** ພວກເຮົາ ໄດ້ຢ້ຳຄືນຄວາມໝາຍໝັ້ນ ເພື່ອຈັດຕັ້ງຜັນຂະຫຍາຍບັນດາຂໍ້ລິເລີ່ມ ແລະ ແຜນປະຕິບັດງານອາຊຽນ-ຍີ່ປຸ່ນ ເພື່ອຮັດແໜ້ນການພົວພັນອາຊຽນ-ຍີ່ປຸ່ນ ທີ່ໄດ້ຖືກຍົກລະດັບຂຶ້ນເປັນຄູ່ຮ່ວມຍຸດທະສາດຮອບດ້ານໃນປີ 2023.
- **ກອງປະຊຸມສຸດຍອດອາຊຽນ-ອົດສະຕຣາລີ ຄັ້ງທີ 4**: ພວກເຮົາ ໄດ້ຢ້ຳຄືນຄວາມໝາຍໝັ້ນເພື່ອຮັດແໜ້ນການເປັນຄູ່ຮ່ວມຍຸດທະສາດຮອບດ້ານອາຊຽນ-ອົດສະຕຣາລີ ໃນຊຸມປີຕໍ່ໜ້າ ແລະ ສືບຕໍ່ຈັດຕັ້ງປະຕິບັດ 2 ເອກະສານຜົນຂອງກອງປະຊຸມສຸດຍອດສະເຫຼີມສະຫຼອງການພົວພັນຮ່ວມມືອາຊຽນ-ອົດສະຕຣາລີ ທີ່ ເມວເບີນ, ອົດສະຕຣາລີ ໃນເດືອນ ມີນາ ປີ 2024 ແລະ ບັນດາແຜນວຽກ ໃຫ້ມີປະສິດທິຜົນ.
- **ກອງປະຊຸມສຸດຍອດອາຊຽນ-ອິນເດຍ ຄັ້ງທີ 21:** ພວກເຮົາ ໄດ້ຮັບຮອງເອົາ 2 ເອກະສານ ຄື: 1). ຖະແຫຼງການຮ່ວມ ວ່າດ້ວຍການຮັດແໜ້ນການເປັນຄູ່ຮ່ວມຍຸດທະສາດຮອບດ້ານອາຊຽນ-ອິນເດຍ ເພື່ອສັນຕິພາບ, ສະຖຽນລະພາບ ແລະ ຄວາມສົມບູນພູນສຸກໃນພາກພື້ນ ພາຍໃຕ້ແນວຄວາມຄິດອາຊຽນ ກ່ຽວກັບອິນໂດ-ປາຊີຟິກ ໂດຍການສະໜັບສະໜູນຂອງ ນະໂຍບາຍຫັນສູ່ຕາເວັນອອກຂອງ ອິນເດຍ ແລະ 2).ຖະແຫຼງການຮ່ວມ ວ່າດ້ວຍການພັດທະນາການຫັນປ່ຽນທາງດິຈິຕອນ**.** ພວກເຮົາ ໄດ້ຍິນດີຕໍ່ການກຳນົດເອົາປີ 2025 ເປັນປີສະເຫຼີມສະຫຼອງການທ່ອງທ່ຽວອາຊຽນ-ອິນເດຍ.
- **ກອງປະຊຸມສຸດຍອດອາຊຽນ-ສະຫະລັດ ອາເມລິກາ ຄັ້ງທີ 12:** ຜູ້ນຳອາຊຽນ-ສະຫະລັດ ໄດ້ຮັບຮອງເອົາຖະແຫຼງການຮ່ວມຜູ້ນຳອາຊຽນ-ສະຫະລັດ ວ່າດ້ວຍປັນຍາປະດິດທີ່ປອດໄພ, ໝັ້ນຄົງ ແລະ ເຊື່ອຖືໄດ້.
- **ກອງປະຊຸມສຸດຍອດອາຊຽນ-ສປຊ ຄັ້ງທີ 14:** ພວກເຮົາໄດ້ຢ້ຳຄືນຄວາມສຳຄັນໃນການຮັດແໜ້ນຫຼັກການຮ່ວມມືຫຼາຍຝ່າຍ ລວມທັງ ຄວາມໝາຍໝັ້ນໃນການຈັດຕັ້ງຜັນຂະຫຍາຍ ການເປັນຄູ່ຮ່ວມມືຮອບດ້ານອາຊຽນ-ສປຊ. ພວກເຮົາ ເຫັນວ່າ ອາຊຽນ ແລະ ສປຊ ຄວນສືບຕໍ່ຊຸກຍູ້ຄວາມພະຍາຍາມ ແນໃສ່ສົ່ງເສີມການເຊື່ອມສານ ລະຫວ່າງ ວິໄສທັດປະຊາຄົມອາຊຽນ 2025 ກໍ່ຄືວິໄສທັດປະຊາຄົມອາຊຽນ 2045 ແລະ ວາລະ 2030 ເພື່ອການພັດທະນາແບບຍືນຍົງ.

- **ກອງປະຊຸມສຸດຍອດອາຊຽນ-ການາດາ ສະໄໝພິເສດ ວ່າດ້ວຍການເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງອາຊຽນ:** ຜູ້ນຳອາຊຽນ-ການາດາ ໄດ້ຮັບຮອງເອົາ ຖະແຫຼງການຮ່ວມຜູ້ນຳອາຊຽນ- ການາດາ ວ່າດ້ວຍການເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງອາຊຽນ ເພື່ອສືບຕໍ່ຮັດແໜ້ນຄູ່ຮ່ວມຍຸດທະສາດອາຊຽນ-ການາດາ.
- **ກອງປະຊຸມຍຸດຍອດອາຊຽນບວກສາມ ຄັ້ງທີ 27:** ພວກເຮົາ ໄດ້ຢ້ຳຄືນຄວາມສຳຄັນຂອງກົນໄກອາຊຽນບວກສາມໃນການສົ່ງເສີມການຮ່ວມມືພາກພື້ນອາຊີຕາເວັນອອກ ແລະ ໄດ້ຢ້ຳຄືນຄວາມໝາຍໝັ້ນໃນການຈັດຕັ້ງປະຕິບັດບັນດາແຜນວຽກ ແລະ ກິດຈະກຳການຮ່ວມມືໃຫ້ມີປະສິດທິຜົນ. ກອງປະຊຸມໄດ້ຮັບຮອງເອົາ ຖະແຫຼງການຜູ້ນຳອາຊຽນບວກສາມ ວ່າດ້ວຍ ການຮັດແໜ້ນການເຊື່ອມຈອດຕ່ອງໂສ້ການສະໜອງພາກພື້ນ.
- **ກອງປະຊຸມສຸດຍອດອາຊີຕາເວັນອອກ (ອີເອເອສ) ຄັ້ງທີ 19:** ກອງປະຊຸມໄດ້ຢ້ຳຄືນຄວາມສຳຄັນຂອງ ອີເອເອສ ໃນການເປັນເວທີທີ່ສຳຄັນຂອງຜູ້ນຳ ເພື່ອປຶກສາຫາລື ແລະ ສົ່ງເສີມການຮ່ວມມືທີ່ສ້າງສັນ ໃນຂົງເຂດຕ່າງໆ ເປັນຕົ້ນແມ່ນ ການປຶກສາຫາລືບັນຫາຍຸດທະສາດ, ການເມືອງ ແລະ ເສດຖະກິດ ທີ່ມີຄວາມສົນໃຈ ແລະ ມີຄວາມເປັນຫ່ວງຮ່ວມກັນ ແລະ ໄດ້ຢ້ຳຄືນຄວາມຫມາຍຫມັ້ນໃນການເສີມຂະຫຍາຍກົນໄກການຮ່ວມມື ອີເອເອສ ໃຫ້ເຂັ້ມແຂງ.

- ລາຍລະອຽດຂອງຜົນກອງປະຊຸມສຸດຍອດທັງໝົດ ສາມາດເບິ່ງໄດ້ໃນເອກະສານທີ່ຖືກຮັບຮອງເອົາ ແລະ ໃນຖະແຫລງການປະທານ.

**ບັນດາທ່ານຜູ້ຕາງໜ້າສື່ມວນຊົນ,**
**ທ່ານຍິງ ແລະ ທ່ານຊາຍ,**

- ໃນໂອກາດກອງປະຊຸມສຸດຍອດອາຊຽນຄັ້ງທີ 44 ແລະ 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງຄັ້ງນີ້, ພວກເຮົາໄດ້ຮັບຮອງ ແລະ ຮັບຊາບເອກະສານຫລາຍກວ່າ 90 ສະບັບ, ພວກເຮົາ ໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງຈິງໃຈ, ກົງໄປກົງມາ ແລະ ສ້າງສັນ ກ່ຽວກັບ ສະພາບການພາກພື້ນ ແລະ ສາກົນ ທີ່ມີຄວາມສົນໃຈ ແລະ ເປັນຫ່ວງຮ່ວມກັນ.
- ສະຫລຸບລວມແລ້ວ, ກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງ ໄດ້ສຳເລັດລົງດ້ວຍຜົນສຳເລັດອັນຈົບງາມ.
- ຜົນສຳເລັດຂອງກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງໃນຄັ້ງນີ້ ກໍຄື ການເປັນປະທານອາຊຽນຂອງ ສປປ ລາວ ແມ່ນຍ້ອນພວກເຮົາ ໄດ້ຮັບການສະໜັບສະໜູນອັນລ້ຳຄ່າ ແລະ ການຮ່ວມມືຢ່າງໃກ້ຊິດ ຈາກບັນດາປະເທດສະມາຊິກອາຊຽນ, ຄູ່

ເຈລະຈາອາຊຽນ ກໍຄື ບັນດາຄູ່ຮ່ວມມືພາຍນອກ ແລະ ປະເທດເພື່ອນມິດ ແລະ ອົງການຈັດຕັ້ງພາກພື້ນ ແລະ ສາກົນ ແລະ ກອງເລຂາອາຊຽນ.

- ຂ້າພະເຈົ້າ ຂໍຕາງໜ້າໃຫ້ລັດຖະບານ, ເຈົ້າໜ້າທີ່ກ່ຽວຂ້ອງໃນການຮັບຜິດຊອບຈັດກອງປະຊຸມສຸດຍອດ ຄັ້ງນີ້ ກໍຄື ປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ສະແດງຄວາມຮູ້ບຸນຄຸນຢ່າງຈິງໃຈ ສໍາລັບ ການຮ່ວມມື ແລະ ສະໜັບສະໜູນດັ່ງກ່າວ ແລະ ຫວັງຢ່າງຍິ່ງວ່າ ຈະສືບຕໍ່ໄດ້ຮັບ ການຮ່ວມມື ແລະ ການ ຊ່ວຍເຫລືອດັ່ງກ່າວຈົນສໍາເລັດການເປັນປະທານອາຊຽນ ຂອງ ສປປ ລາວ ໃນປີ 2024 ແລະ ໃນຊຸມປີຂ້າງ ໜ້າ.
- ຂ້າພະເຈົ້າ ຂໍຕາງໜ້າໃຫ້ລັດຖະບານ ຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈຢ່າງຈິງໃຈ ມາຍັງ ພະນັກງານ, ທະຫານ, ຕໍາຫລວດ, ນັກທຸລະກິດ, ພໍ່ຄ້າຊາວຂາຍ ແລະ ພໍ່ແມ່ພີ່ນ້ອງຊາວລາວບັນດາເຜົ່າທຸກຖ້ວນໜ້າທີ່ ໄດ້ປະກອບສ່ວນຢ່າງຫ້າວຫັນ ຕາມພາລະໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ເຂົ້າໃນການເປັນ ເຈົ້າພາບທີ່ດີ ອັນໄດ້ເຮັດໃຫ້ບັນດາກອງປະຊຸມສຸດຍອດໃນຄັ້ງນີ້ ປະສົບຜົນສໍາເລັດອັນຈົບງາມ.
- ສປປ ລາວ ຈະສືບຕໍ່ເປັນປະທານອາຊຽນຈົນຮອດວັນທີ 31 ທັນວາ 2024. ໃນພິທີປິດ ທີ່ຫາກໍສໍາເລັດໄປ, ສປປ ລາວ ໄດ້ມອບປະທານອາຊຽນ 2025 ໃຫ້ແກ່ ມາເລເຊຍ, ຊຶ່ງຈະເລີ່ມແຕ່ວັນທີ 1 ມັງກອນ 2025 ເປັນຕົ້ນໄປ.
- ທ້າຍສຸດນີ້, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາຍັງ ບັນດາສື່ມວນຊົນທີ່ໄດ້ໃຫ້ຄວາມສົນໃຈ ແລະ ຕິດຕາມການເຄື່ອນໄຫວຂອງບັນດາກອງປະຊຸມສຸດຍອດ ແລະ ກອງປະຊຸມອື່ນໆ ກໍຄື ບັນດາກິດຈະກໍາທີ່ ກ່ຽວຂ້ອງ ຕະຫລອດໄລຍະການເປັນປະທານອາຊຽນ ຂອງ ສປປ ລາວ ໃນປີ 2024 ຊຶ່ງເປັນປີທ່ອງທ່ຽວ ອີກດ້ວຍ.
- ຂໍຂອບໃຈ.